**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**
*************

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເລກທີ: 01 /ສພບຫ.ທຄຕລ
ນະຄອນຫຼວງວຽງຈັນ, ວັນທີ: 07/02/2020

**ມະຕິ**

**ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ**
**ຄັ້ງທີ 1 ປະຈຳປີ 2020, ວັນທີ 07/02/2020**

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນ ຄັ້ງທີ 1 ປະຈຳປີ 2020 ໄດ້ເປີດຂຶ້ນໃນເວລາ 08:30 ໂມງ ຂອງວັນທີ 07/02/2020 ທີ່ສຳນັກງານໃຫຍ່ ທຄຕລ ໂດຍການເປັນປະທານຂອງ ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີກຳມະການສະພາບໍລິຫານ ແລະ ຜູ້ສັງເກດການເຂົ້າຮ່ວມຕາມລາຍຊື່ຊ້ອນທ້າຍ.

**ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງ ດັ່ງນີ້:**

1. ຮັບຮອງບຸກຄະລາກອນເພື່ອປະກອບເຂົ້າໃນສະພາບໍລິຫານ ທຄຕລ ຊຸດໃໝ່ ວາລະເຮັດວຽກ 2020-2022 ເພື່ອເປັນບ່ອນອີງໃຫ້ແກ່ການຄົ້ນຄວ້າຂອງພາກສ່ວນກ່ຽວຂ້ອງ ແລະ ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຮັບຮອງຢ່າງເປັນທາງການ.
2. ຮັບຮອງສັດສ່ວນການແບ່ງປັນກຳໄລຫຼັງອາກອນຂອງ ທຄຕລ ປະຈຳປີ 2019 ເພື່ອນຳສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງ.
3. ຮັບຮອງແຜນການປະຈຳປີ 2020 ຂອງ ທຄຕລ ເພື່ອນຳສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງ.
4. ຮັບຮອງແຜນການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານລາຍງານການເງິນຂອງ ທຄຕລ ຮອດປີ 2025.
5. ຮັບຮອງການກະກຽມກອງປະຊຸມຜູ້ຖືຮຸ້ນປະຈຳປີ 2019 ດັ່ງນີ້:
   - ວັນທີ 01 ເມສາ 2020 ເປັນມື້ປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນປະຈຳປີ 2019 ແລະ ສິດຮັບເງິນປັນຜົນປະຈຳປີ 2019;
   - ວັນທີ 30 ເມສາ 2020 ເປັນມື້ຈັດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2019.
6. ຮັບຮອງການອະນຸມັດສິນເຊື່ອທີ່ຂຶ້ນກັບສິດຂອງສະພາບໍລິຫານ 1 ລາຍການ.
7. ຮັບຮອງເອົາແຜນແມ່ບົດການຈັດຕັ້ງປະຕິບັດຕາມຫຼັກການບາເຊວ II ຂອງ ທຄຕລ (ສະບັບປັບປຸງ).

ກອງປະຊຸມ ໄດ້ປິດລົງໃນເວລາ 12:00 ໂມງ ຂອງວັນດຽວກັນ.

ດັ່ງນັ້ນ, ຈຶ່ງໄດ້ເຮັດມະຕິຕົກລົງສະບັບນີ້ໄວ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ປະທານສະພາບໍລິຫານ**

ປອ. ບຸນເຫຼືອ ສິນໄຊວໍຣະວົງ